# ຄຳຖາມທີ່ພົບເລື້ອຍໆກ່ຽວກັບການສຳເນົາຂໍ້ມູນວັກຊີນໂຄວິດ-19

ທ່ານອາດຈະໄດ້ຍິນຂໍ້ມູນຫຼາຍຢ່າງກ່ຽວກັບວັກຊີນໂຄວິດ-19 ໃນປັດຈຸບັນ.
ພວກເຮົາຕ້ອງການຄຳຕອບຈາກຄຳຖາມທົ່ວໄປຈຳນວນໜຶ່ງທີ່ກ່ຽວກັບວັກຊີນໂຄວິດ-19 ທີ່ກຳລັງຖືກຜະລິດ.

## ວັກຊີນໂຄວິດ-19 ຜະລິດໄວຂຶ້ນໄດ້ແນວໃດ?

ໂດຍປົກກະຕິແລ້ວ, ການທົດສອບວັກຊີນເພື່ອໃຫ້ແນ່ໃຈວ່າມັນປອດໄພ ແລະ ໄດ້ຜົນດີກ່ອນທີ່ຢາວັກຊີນຈຳນວນ ຫຼາຍຈະຖືກຜະລິດ. ຍ້ອນມີການແຜ່ລະບາດ ແລະ ເງິນຊ່ວຍເຫຼືອຈາກຣັຖບານກາງ, ນັກວິທະຍາສາດກຳລັງເຮັດ ທັງສອງຢ່າງໃນເວລາດຽວກັນ. ມີພຽງແຕ່ວັກຊີນທີ່ໄດ້ຖືກທົດສອບ ແລະ ສະແດງໃຫ້ເຫັນວ່າປອດໄພເທົ່ານັ້ນ ທີ່ຈະ ຖືກນຳມາໃຊ້.

## ການທົດລອງວັກຊີນແມ່ນດ້ວຍວິທີໃດ?

ມີວັກຊີນໂຄວິດ-19 ຫລາຍຊະນິດທີ່ແຕກຕ່າງກັນໄດ້ຖືກທົບສອບ. ການທົດສອບເຫຼົ່ານີ້ເອີ້ນວ່າການທົດລອງທາງການແພດແຕ່ລະປະເພດຂອງວັກຊີນແມ່ນດຳເນີນການທົດລອງຫຼາຍກວ່າໜຶ່ງຄັ້ງ. ທຳອິດ, ວັກຊີນຖືກທົດລອງກັບອາສາ ສະໝັກກຸ່ມນ້ອຍ, ຫຼັງຈາກນັ້ນກໍ່ເພີ່ມຂຶ້ນເປັນຫຼາຍຮ້ອຍຄົນ, ແລະ ເປັນສິບພັນຄົນ. ອາສາສະໝັກສຳລັບການທົດລອງ ວັກຊີນໂຄວິດ-19 ແມ່ນມາຈາກຫຼາຍຊຸມຊົນ ແລະ ພື້ນຖານຕ່າງກັນ. ນີ້ແມ່ນຂັ້ນຕອນການທົດລອງການນຳໃຊ້ວັກຊີນ ອື່ນໆເຊັ່ນກັນ.

## ວັກຊີນຈະຖືກອະນຸຍາດໃຫ້ໃຊ້ໄດ້ແນວໃດ?

ສຳລັບວັກຊີນທີ່ມີການທົດລອງທັງໝົດທີ່ຜ່ານມາ, ທີມງານຊ່ຽວຊານການແພດຈະຕິດຕາມຜົນການທົດລອງ ແລະ ຄວາມຮູ້ສຶກຂອງຄົນພາຍຫຼັງທີ່ພວກເຂົາໄດ້ຮັບວັກຊີນ. ຖ້າວັກຊີນສາມາດນຳໃຊ້ໄດ້ ແລະ ມີຄວາມປອດໄພ, ມັນຈະຖືກອະນຸມັດ. ນັກວິທະຍາສາດ ແລະ ຊ່ຽວຊານຫຼາຍກຸ່ມທີ່ໄດ້ມີການຕິດຕາມຂໍ້ມູນຄວາມປອດໄພຂອງວັກຊີນໂຄວິດ-19 ແລະ ໃຫ້ຄຳ ແນະນຳ. ມີພຽງແຕ່ວັກຊີນທີ່ໄດ້ຮັບການອະນຸມັດເທົ່ານັ້ນທີ່ຈະຖືກນຳໃຊ້ໃຫ້ແກ່ປະຊາຊົນ.

## ແມ່ນໃຜທີ່ຈະໄດ້ຮັບວັກຊີນເປັນຜູ້ທຳອິດ?

ກຸ່ມທີ່ໃຫ້ຄຳແນະນຳລະດັບຊາດຂອງ CDC ເບິ່ງຂໍ້ມູນ ແລະ ໃຫ້ຄຳແນະນຳສຳລັບຜູ້ທີ່ຄວນໄດ້ຮັບວັກຊີນກ່ອນ. ບາງກຸ່ມທີ່ມີຄວາມສ່ຽງສູງທີ່ສຸດສຳລັບ ໂຄວິດ-19 ຫຼື ອາດຈະປ່ວຍຮ້າຍແຮງຍ້ອນໂຄວິດ-19 ຈະໄດ້ຮັບວັກຊີນກ່ອນໝູ່. ມິນນີໂຊຕ້າມີທີມຜູ້ຊ່ຽວຊານທີ່ຈະຊ່ວຍແຈກຈ່າຍວັກຊີນໃຫ້ທົ່ວທຸກຄົນເທົ່າກັນ, ໂດຍສຸມໃສ່ຄວາມສະເໝີພາບດ້ານສຸຂະພາບ.

ເມື່ອມີຢາວັກຊີນຫຼາຍຂຶ້ນ, ຄົນສ່ວນຫຼາຍຈະໄດ້ຮັບການສັກຢາວັກຊີນທຸກຄົນ, ແຕ່ວ່າຕ້ອງໃຊ້ເວລາຫຼາຍເດືອນ ກ່ອນມີວັກຊີນພຽງພໍສຳລັບທຸກໆຄົນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວັກຊີນໂຄວິດ-19 ເຂົ້າເບິ່ງໄດ້ທີ່ເວັບໄຊທ໌ຂອງພະແນກສາທາລະນະສຸກ.


Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us



11/09/2020 (Lao)


*To obtain this information in a different format, call: 651-201-4989.*